ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ ຫ້ອງການ ທຫລ
ໂທ/ແຟກ (856-21) 213109, 213110

# ກອງປະຊຸມສະຫຼຸບຕີລາຄາການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ່ II ໄລຍະກາງສະໄໝ ຂອງໜ່ວຍພັກ ສກໜ




ໃນຕອນບ່າຍຂອງວັນທີ 26 ມິຖຸນາ 2023 ນີ້, ທີ່ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດກອງປະຊຸມສະຫຼຸບຕີລາຄາການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ່ II ໄລຍະກາງສະໄໝ ຂອງໜ່ວຍພັກ ສູນເກັບຊື້ໜີ້ ແລະ ຮັບຝາກເກັບໜີ້ (ສກໜ) ຂຶ້ນ ໂດຍພາຍໃຕ້ການເປັນປະທານຂອງສະຫາຍ ອາລຸນ ບຸນຍົງ ກຳມະການພັກ, ຮອງປະທານຄະນະກວດກາພັກ ທຫລ, ມີສະຫາຍເລຂາໜ່ວຍພັກ ແລະ ສະມາຊິກພັກ (ສກໜ) ເຂົ້າຮ່ວມ 25 ກວ່າສະຫາຍ.



ກອງປະຊຸມໃນຄັ້ງນີ້, ແມ່ນໄດ້ດຳເນີນໃນທ່າມກາງບັນຍາກາດທີ່ທົ່ວພັກ, ທົ່ວລັດ ແລະ ທົ່ວປວງຊົນລາວທັງຊາດ ພວມສຸມໃສ່ຈັດຕັ້ງປະຕິບັດການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ຊຶ່ງເຫັນວ່າມີສິ່ງທ້າທາຍຫຼາຍປະການ, ທັງປັດໃຈພາຍນອກ ແລະ ພາຍໃນ ທີ່ກະທົບໃສ່. ຄຽງຄູ່ກັນນີ້, ໜ່ວຍພັກ ສກໜ ກໍໄດ້ສຸມໃສ່ຂະຫຍາຍມະຕິກອງປະຊຸມໃຫຍ່ຜູ້ແທນອົງຄະນະພັກຄັ້ງທີ IV ແລະ ເອົາໃຈໃສ່ປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ່ II ຂອງໜ່ວຍພັກຕົນໃຫ້ບັນລຸຜົນສຳເລັດຕາມຄາດໝາຍທີ່ວາງໄວ້ ແນໃສ່ເຮັດໃຫ້ພາຍໃນພັກມີຄວາມປອດໃສ, ເຂັ້ມແຂງ, ໜັກແໜ້ນ; ສືບຕໍ່ພາລະກິດປ່ຽນແປງໃໝ່ຮອບດ້ານ ໂດຍສະເພາະສະພາບຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ທີ່ເປັນເງື່ອນໄຂຈຳກັດຕໍ່ການພັດທະນາ ຊຶ່ງຕ້ອງໄດ້ພ້ອມກັນສຸມທຸກເຫຼື່ອແຮງ, ກຳລັງ ແລະ ຄວາມສາມາດເພື່ອສູ້ຊົນຜ່ານໄປໃຫ້ໄດ້ ເຮັດໃຫ້ປະເທດຊາດຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ ແລະ ກ້າວຂຶ້ນສູ່ຈຸດໝາຍສັງຄົມນິຍົມ.




ພ້ອມດຽວກັນນີ້, ທີ່ປະຊຸມຍັງໄດ້ຮັບຟັງຜ່ານ ຮ່າງ ບົດສະຫຼຸບຕີລາຄາການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຂອງໜ່ວຍພັກ ສກໜ ໃນໄລຍະຜ່ານມາ ແລະ ກຳນົດທິດທາງແຜນການໃນເຄິ່ງສະໄໝຕໍ່ໜ້າ.

ກອງປະຊຸມດັ່ງກ່າວແມ່ນໄດ້ດຳເນີນໄປເປັນເວລາເຄິ່ງວັນ ແລະ ເປັນຂີດໝາຍສຳຄັນ, ເນື່ອງຈາກຈະໄດ້ພ້ອມກັນສະຫຼຸບຕີລາຄາຄືນໃນການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ່ II ໃນໄລຍະກາງສະໄໝຜ່ານມາ ແລະ ປະກອບຄວາມຄິດຄວາມເຫັນຕໍ່ຮ່າງບົດສະຫຼຸບດັ່ງກ່າວ ເພື່ອຍົກໃຫ້ເຫັນດ້ານຕັ້ງໜ້າ ແລະ ຂໍ້ຄົງຄ້າງຂອງຄະນະໜ່ວຍພັກໃນການຊີ້ນຳ-ນຳພາ ໄລຍະກາງສະໄໝຜ່ານມາ ແລະ ປະກອບຄຳເຫັນຕໍ່ຄະນະກວດກາພັກ ທຫລ (ຜູ້ຊີ້ນຳໜ່ວຍພັກ) ແລະ ປະກອບຄຳເຫັນຕໍ່ການນຳພາລວມຂອງໜ່ວຍພັກ ແລະ ບຸກຄົນຄະນະໜ່ວຍພັກ.

**ຂ່າວ-ພາບ: ສົມພົດ ທຳມະວົງ**

*ຢູ່ເມືອງລາວ ໃຊ້ເງິນກີບລາວ*